**ມິຊຊາອາທິດທີ 5 ກຳນົດທຳມະດາ ປີ C**

**ວັນທີ 10 ກຸມພາ 2019**



**ພຣະວໍລະສານໂດຍນັກບຸນລູກາ 5, 1-11**

ໃນເວລານັ້ນມີມະຫາຊົນຫລັ່ງໄຫລມາຟັງໂອວາດຂອງພຣະເຈົ້າ ແລະພຣະເຢຊູເຈົ້າເອງກໍປະທັບບົນຝັ່ງທະເລເຢເນຊາແລັດ. ພຣະອົງທອດພຣະເນດເຫັນເຮືອສອງລຳຈອດຢູ່ຣິມຝັ່ງ, ສ່ວນຊາວປະມົງນັ້ນຂຶ້ນຈາກເຮືອໄປລ້າງມອງ. ພຣະອົງຈຶ່ງສະເດັດລົງໃນເຮືອລຳໜຶ່ງ ອັນແມ່ນຂອງຊີມອນ. ພຣະອົງສັ່ງບອກໃຫ້ພາຍອອກໄກຝັ່ງໜ້ອຍໜຶ່ງ. ແລ້ວພຣະອົງກໍຊົງນັ່ງເທດສະໜາສັ່ງສອນ.

ເມື່ອເທດສະໜາແລ້ວ, ພຣະອົງກໍສັ່ງບອກຊີມອນວ່າ: ຈົ່ງພາຍອອກກາງວັງແລ້ວຕົກມອງເອົາປາເຖີດ. ຊີມອນທູນຕອບວ່າ: ພຣະອາຈານເອີຍ! ພວກຂ້ານ້ອຍໄດ້ທຳງານອິດອ່ອນຕະຫລອດຄືນແລ້ວແຕ່ບໍ່ໄດ້ຫຍັງ ຫາກເມື່ອພຣະອາຈານສັ່ງຂ້ານ້ອຍກໍຈະເອົາມອງລົງ. ແລະເມື່ອເອົາມອງລົງແລ້ວກໍຖືກປາມາກຫລາຍຈົນມອງຂາດ. ພວກເຂົາຈຶ່ງກວັກມືເອີ້ນໝູ່ຊາວປະມົງທີ່ຢູ່ເຮືອອີກລຳໜຶ່ງມາຊ່ວຍ. ພວກນັ້ນກໍໄດ້ພາກັນມາ ແລະຂົນປາຂຶ້ນໃສ່ເຕັມເຮືອທັງສອງລຳຈົນວ່າເກືອບຈະຫລົ້ມ.

ເຫັນດັ່ງນັ້ນ, ຊີມອນເປໂຕຈຶ່ງຂາບລົງແທບພຣະບາດຂອງພຣະເຢຊູເຈົ້າທູນວ່າ: ພຣະອົງເອີຍ! ເຊີນໜີຈາກຂ້ານ້ອຍເຖີດ ຍ້ອນຂ້ານ້ອຍແມ່ນຄົນບາບ. ຍ້ອນວ່າຊີມອນແລະພວກທີ່ຢູ່ກັບເຂົາເຫັນປາຖືກມອງຫລາຍກໍພາກັນງຶດຢ່າງໃຫຍ່. ຢາໂກເບ, ຢວງບຸດຂອງເຊເບເດທີ່ເປັນໝູ່ຂອງຊີມອນກໍມີຄວາມຢ້ານກົວດ້ວຍ.

ພຣະເຢຊູເຈົ້າຈຶ່ງກ່າວກັບຊີມອນວ່າ: ຢ່າຢ້ານເລີຍ! ແຕ່ນີ້ໄປເຈົ້າຈະໄຫລມອງຈັບເອົາຄົນ. ແລະເມື່ອພາຍເຮືອມາເຖິງຝັ່ງແລ້ວ ພວກເຂົາກໍພາກັນປະຖິ້ມທຸກຢ່າງແລ້ວຕິດຕາມພຣະເຢຊູເຈົ້າໄປ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 5, 1-11**

ວັນອາທິດທີ່ຜ່ານມາ, ເມື່ອເຖິງວັນພຣະ, ພຣະເຢຊູຊາວນາຊາແລັດໄດ້ເຂົ້າໃນໄປໂຮງທັມອ່ານໜັງສືປະພາສົກອີຊາຢາແລະໄດ້ແປອະທິບາຍຂໍ້ຄວາມຂອງໜັງສືເລັ່ມນີ້. ຄົນທັງຫລາຍທີ່ຟັງພຣະເຢຊູເຈົ້າຕ່າງກໍຖາມຕົວເອງວ່າ ເພິ່ນຜູ້ນີ້ບໍ່ແມ່ນລູກຂອງຢໍແຊຊ່າງໄມ້ນັ້ນບໍ? ແລະແມ່ເພິ່ນບໍ່ແມ່ນມາຣີອາໄທບ້ານນາຊາແລັດນັ້ນບໍ? ຄໍາຖາມເຫລົ່ານີ້ທໍາໃຫ້ຝູງຊົນຂາດຄວາມເຊື່ອຖືໃນຄໍາສັ່ງສອນຂອງພຣະເຢຊູເຈົ້າ. ດັ່ງນັ້ນພວກເຂົາຈຶ່ງບໍ່ຟັງຄໍາເທດສອນຂອງພຣະອົງແລະຫາທາງຢາກທໍາລາຍພຣະອົງ.

ວັນນີ້, ພຣະເຢຊູຊາວນາຊາແລັດກໍສືບຕໍ່ເທດສະໜາສັ່ງສອນຈົນເຖິງແຄມທະເລສາບເຢເນຊາແລັດ. ໃນເວລານັ້ນ, ກໍມີຄົນຜູ້ໜຶ່ງຊື່ຊີມອນ, ເປັນຊາວປະມົງທີ່ພວມສິ້ນຫວັງຢູ່ ເພາະເຂົາໄດ້ອິດເມື່ອຍຕະຫລອດຄືນແຕ່ກໍບໍ່ໄດ້ປາຈັກໂຕ. ພຣະເຢຊູເຈົ້າກ່າວກັບຊີມອນວ່າ: ຈົ່ງພາຍເຮືອອອກກາງວັງແລະຕົກມອງເອົາປາເຖີດ. ຄໍາເວົ້າຂອງພຣະເຢຊູເຈົ້ານີ້ອາດທໍາໃຫ້ຊີມອນມີຄວາມສົງໄສແລະເຊື່ອໄດ້ຍາກ. ຍ້ອນຫຍັງ? ຍ້ອນວ່າ ພຣະເຢຊູເຈົ້າບໍ່ແມ່ນຊາວປະມົງ ແລະບໍ່ມີປະສົບການໃນການຫາປາ. ພຣະອົງອາດຈະບໍ່ຮູ້ຈັກໃນສິ່ງທີ່ພຣະອົງກ່າວ. ສ່ວນຊີມອນເອງຜູ້ມີອາຊີບເປັນຊາວປະມົງ, ເຂົາຮູ້ຈັກດີກ່ຽວກັບການຫາປາແລະເຂົາເອງກໍຈົນປັນຍາຍ້ອນບໍ່ມີປາ. ແຕ່ຖ້າພຣະອາຈານສັ່ງ ຂ້ານ້ອຍກໍຈະປະຕິບັດຕາມ. ການປະຕິບັດຕາມຄໍາເວົ້າຂອງພຣະເຢຊູເຈົ້ານີ້ບໍ່ໝາຍຄວາມວ່າຊີມອນເຊື່ອໃນພຣະອົງ. ແລະຜົນທີ່ຕາມມາ, ພວກເຮົາກໍຮູ້ຈັກນໍາກັນຄື: ປາໄດ້ຖືກມອງຢ່າງຫລວງຫລາຍ, ຈົນມອງເກືອບຂາດ. ອາດຈະແມ່ນສິ່ງນີ້ທີ່ທໍາໃຫ້ຊີມອນມີຄວາມພິດສະຫວົງ, ຢ້ານກົວ, ແລະກ່າວກັບພຣະເຢຊູເຈົ້າວ່າ: ພຣະອົງເອີຍ! ຈົ່ງຖອຍໄກຈາກຂ້ານ້ອຍເຖີດ. ເພາະຂ້ານ້ອຍເປັນຄົນບາບ. ຄວາມສໍານຶກຜິດຂອງຊີມອນນີ້ອາດຈະແມ່ນການຂາດຄວາມເຊື່ອໝັ້ນໃນວາຈາຂອງພຣະເຢຊູເຈົ້າ. ອາດຈະແມ່ນເຂົາມີຄວາມເຊື່ອໝັ້ນໃນຄວາມສາມາດຂອງຕົວເອງກວ່າຄໍາເວົ້າຂອງພຣະອາຈານ. ເມື່ອຊີມອນສໍານຶກຜິດແລ້ວ, ພຣະເຢຊູເຈົ້າກໍອະໄພໃຫ້ເຂົາທັນທີໂດຍກ່າວວ່າ: ຢ່າຢ້ານເລີຍ! ແຕ່ນີ້ໄປເຈົ້າຈະໄຫລມອງຈັບເອົາຄົນ. ການໄຫລມອງຈັບປາຫລືຈັບເອົາຄົນລ້ວນແຕ່ຕ້ອງອາໄສຄວາມເຊື່ອໃນພຣະເຢຊູເຈົ້າ. ເພາະບໍ່ມີພຣະອົງແລ້ວ ມະນຸດກໍບໍ່ສາມາດກະທໍາສິ່ງໃດໄດ້ເລີຍ.

ບົດຮຽນທີ່ພວກເຮົາໄດ້ຮັບຈາກຊີມອນໃນວັນນີ້ຢາກບອກເຕືອນພວກເຮົາຫຍັງ? ແນ່ນອນ, ຫລາຍຄັ້ງທີ່ພວກເຮົາຜູ້ເປັນລູກສິດຂອງພຣະເຢຊູເຈົ້າທີ່ຕ້ອງປະເຊີນໜ້າກັບບັນຫາຕ່າງໆນາໆໃນຊີວິດ ພວກເຮົາອາດຄິດວ່າສິ່ງທີ່ຕ້ອງທໍາກ່ອນອື່ນໝົດຄືຊອກຫາວິທີແກ້ໄຂຕາມຄວາມສາມາດຂອງຕົນ. ແລະບາງຄັ້ງພວກເຮົາອາດຄິດວ່າພຣະເຈົ້າບໍ່ເຂົ້າໃຈພວກເຮົາແລະພຣະອົງກໍບໍ່ສາມາດຊ່ວຍພວກເຮົາໄດ້. ຄວາມຄິດນີ້ທໍາໃຫ້ພວກເຮົາຈົມຢູ່ໃນບັນຫາແລະເກີດຄວາມສິ້ນຫວັງ. ແຕ່ຖ້າຫາກພວກເຮົາເຊື່ອແລະທໍາຕາມວາຈາທີ່ພຣະເຈົ້າກ່າວກັບພວກເຮົາເໝືອນກັບພຣະອົງກ່າວກັບຊີມອນໃນວັນນີ້ , ແນ່ນອນພວກເຮົາຈະພົບກັບທາງອອກແລະວິທີແກ້ໄຂບັນຫາທີ່ດີຕາມນໍ້າພຣະໄທຂອງພຣະເຈົ້າ. ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ຊ່ວຍພວກເຮົາໃຫ້ພົບກັບແສງສະວ່າງແລະຄວາມເຊື່ອໃນວາຈາຂອງພຣະເຈົ້າເພື່ອຊີວິດຂອງພວກເຮົາຈະໄດ້ເກີດໝາກຜົນຢ່າງອຸດົມສົມບູນດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ